# ການລະບຸຂໍ້ມູນອອນລາຍທີ່ບິດເບືອນ

ເຄັດລັບສຳລັບການຄິດວິເຄາະແບບຮອບດ້ານ






# ຄວາມຜິດປົກກະຕິຂອງຂໍ້ມູນ

ຄົນຈຳນວນຫຼາຍຮັບຮູ້ຂ່າວສານ ແລະ ຂໍ້ມູນຕ່າງໆຈາກ
ສື່ສັງຄົມອອນລາຍ ແທນທີ່ຈະເປັນສື່ມວນຊົນແບບດັ້ງເດີມ

ສະນັ້ນມັນເປັນການຍາກທີ່ຈະຮູ້ວ່າຂ່າວ ຫຼື ຂໍ້ມູນນັ້ນ
ໜ້າເຊື່ອຖືໄດ້ຫຼາຍປານໃດ.

ມັນອາດຈະເປັນສັນຍານວ່າເຈົ້າແນມເຫັນ...

**ຖ້າເຈົ້າສັງເກດເຫັນອັນໃດອັນໜຶ່ງຕໍ່ໄປນີ້ ຢູ່ໃນສື່ສັງຄົມອອນລາຍ ຫຼື ບົດຄວາມຂ່າວ, ຈົ່ງລະວັງ!**

# ຂໍ້ມູນທີ່ບິດເບືອນ

# ສັນຍານເຕືອນຂອງຂໍ້ມູນທີ່ບິດເບືອນ




## ພາດຫົວຂ່າວທີ່ເກີນຈິງ ຫຼື ສ້າງຄວາມຮູ້ສຶກຕາມ

ພາດຫົວຂ່າວ ແລະ ຮູບພາບທີ່ໜ້າຕົກໃຈ, ເຫຼືອເຊື່ອ ຫຼື ສະເທືອນໃຈ ຫຼື ມີເຄື່ອງໝາຍອຸທານຈຳນວນຫຼາຍ(!!!) ອາດຈະພະຍາຍາມດຶງດູດຄວາມສົນໃຈຂອງເຈົ້າ




## ຂໍ້ຜິດພາດຂອງການສະກົດຄຳ ຫຼື ໄວຍະກອນ

ບົ່ງບອກວ່າຜູ້ເຜີຍແຜ່ບໍ່ແມ່ນ ມືອາຊີບ

# ສັນຍານເຕືອນຂອງຂໍ້ມູນທີ່ບິດເບືອນ




**ຖ້າມີການລາຍງານແຕ່ຢູ່ແຫຼ່ງດຽວ**

ຫາກມີການລາຍງານເລືອງໃດໜຶ່ງ ທີ່ມາຈາກແຫຼ່ງດຽວ, ອາດຈະບໍ່ແມ່ນເລື່ອງຈິງ ລອງກວດສອບແຫຼ່ງຂໍ້ມູນອື່ນໆ ເພື່ອເບິ່ງວ່າມີແຫຼ່ງຂໍ້ມູນອື່ນ ທີ່ລາຍງານໃນເລື່ອງດັ່ງກ່າວ ຫຼື ບໍ່!



**ຜູ້ຂຽນເລື່ອງນີ້ໄດ້ລະບຸໄວ້ບໍ່?**

ພວກເຂົາອາດຈະລີ້ຢູ່ເບື້ອງຫຼັງປົກປິດໂຕຕົນ ແລະ ບໍ່ຢາກຊອກຄົ້ນຫາເລື່ອງລາວອື່ນໆ ທີ່ຕົນເຄີຍເຮັດໄວ້. ຈົ່ງລະວັງ!.



ສັນຍານເຕືອນຂອງຂໍ້ມູນທີ່ບິດເບືອນ




## ທີ່ຢູ່ໃນອິນເຕີເນັດແປກໆບໍ່ ?

ເຈົ້າຮູ້ບໍ່? ບາງຄັ້ງຜູ້ທີ່ປ່ອຍຂ່າວປອມຈະສ້າງ ເວັບໄຊ URL ທີ່ຄ້າຍຄືກັບເວັບໄຊແທ້ໆ ແຕ່ຕ່າງກັນພຽງໜ້ອຍດຽວ. URL ປອມ ນັ້ນຈະນໍາພາເຮົາໄປສູ່ເວັບໄຊປອມ.

Breaking-CNN.com ມາແທນ CNN.com, ຫຼື BBC-TV.com ມາແທນ bbcnews.com

## ໜ້າເພສນັ້ນໄດ້ກະຕຸ້ນອາລົມໃຫ້ເຮົາ ເກີດຄວາມຂັດຂ້ອງໝອງໃຈຄວາມກຽດຊັງ ຫຼື ຄວາມຢ້ານກົວ ຫຼື ບໍ່?

ຫາກພາບຫຼືຂໍ້ຄວາມໃດເຮັດໃຫ້ກະຕຸ້ນອາລົມເຮົາແຮງ ຢ່າຟ້າວກົດໃນທັນທີ ການກະຕຸ້ນອາລົມເຮົາໂດຍສະເພາະ ອາລົມຢາກຮ້າຍ ແລະ ຄຽດແຄ້ນ, ເປັນກົນອຸບາຍທົ່ວໄປ ທີ່ບັນດາເຄືອຂ່າຍຂ່າວປອມ

# ສັນຍານເຕືອນຂອງຂໍ້ມູນທີ່ບິດເບືອນ




**ຮູບນັ້ນກົງກັບເລື່ອງນັ້ນບໍ່ ?**

ຮູບຖ່າຍທີ່ບໍ່ຈິງ, ຫລ້າສະໄໝ ຫຼື ບໍ່ ກ່ຽວຂ້ອງກັບບໍລິບົດອາດເຮັດໃຫ້ ຄົນເຂົ້າໃຈຜິດກ່ຽວກັບເຫດການ ນັ້ນໄດ້.




**ເປັນຄໍາກ່າວອ້າງທີ່ໜ້າຕື່ນຕາຫຼືບໍ່?**

ຄໍາກ່າວອ້າງທີ່ໂດດເດັ່ນ ເຊັ່ນ: ການຮັກສາສຸດ ປາຕິຫານ, ແຜນການສ້າງລາຍໄດ້ - ເຫດການ ທີ່ໜ້າຕື່ນຕາ - ຕ້ອງການຫຼັກຖານທີ່ໂດດເດັ່ນ. ເຫຼົ່ານີ້ຖ້າຫາກບໍ່ມີຫຼັກຖານ ຢ່າເຊື່ອ!

ຖ້າເຈົ້າເຫັນສັນຍານເຕືອນ
ອັນໃດອັນໜຶ່ງເຫຼົ່ານີ້...

ຢ່າໄປແບ່ງປັນເດັດຂາດ!



ມາເຮັດແບບທົດສອບນຳກັນ!

ກັບຄືນໄປສູ່ຫ້ອງຮຽນ.